ສວ-ບກລ
LCPAA

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

Lao Chamber of Professional Accountants and Auditors

# ລະບຽບການ

## ກ່ຽວກັບ ການຝຶກງານເປັນນັກຊ່ຽວຊານບັນຊີລາວ

# ສາລະບານ


ພາກທີ I ບົດບັນຍັດທົ່ວໄປ ---------- 1

ມາດຕາ 1 ຈຸດປະສົງ .......... 1
ມາດຕາ 2 ການຝຶກງານເປັນນັກຊ່ຽວຊານບັນຊີ .......... 1
ມາດຕາ 3 ອະທິບາຍຄຳສັບ .......... 2
ມາດຕາ 4 ຫຼັກການໃນຄຸ້ມຄອງການຝຶກງານເປັນນັກຊ່ຽວຊານບັນຊີ .......... 3

ພາກທີ II ການຝຶກງານເປັນນັກຊ່ຽວຊານບັນຊີ ---------- 4

ມາດຕາ 5 ຂອບເຂດການຝຶກງານເປັນນັກຊ່ຽວຊານບັນຊີ .......... 4
ມາດຕາ 6 ຊຸດຝຶກອົບຮົມສະໜັບສະໜູນດ້ານວິຊາຊີບ .......... 5
ມາດຕາ 7 ຂອບຂ່າຍຄວາມສາມາດໃນການຝຶກງານ .......... 5
ມາດຕາ 8 ກຳນົດໄລຍະເວລາການຝຶກງານ .......... 7
ມາດຕາ 9 ການເລີ່ມຕົ້ນຝຶກງານ .......... 7
ມາດຕາ 10 ການຄິດໄລ່ໄລຍະເວລາການຝຶກງານ .......... 7
ມາດຕາ 11 ການຍົກເວັ້ນການຝຶກງານ .......... 7
ມາດຕາ 12 ການຫຼຸດໄລຍະເວລາການຝຶກງານ .......... 8
ມາດຕາ 13 ການໂຈະ ຫຼື ການຍົກເລີກການຝຶກງານ .......... 9
ມາດຕາ 14 ທີ່ປຶກສາບັນຊີ ລຸ້ນຜ່ານມາ .......... 9

ພາກທີ III ນັກຝຶກງານເປັນນັກຊ່ຽວຊານບັນຊີ ---------- 9

ມາດຕາ 15 ເງື່ອນໄຂການຂຶ້ນທະບຽນນັກຝຶກງານເປັນນັກຊ່ຽວຊານບັນຊີ .......... 9
ມາດຕາ 16 ຄຳຮ້ອງສຳລັບຂຶ້ນທະບຽນນັກຝຶກງານເປັນນັກຊ່ຽວຊານບັນຊີ .......... 10
ມາດຕາ 17 ການພິຈາລະນາຄຳຮ້ອງຂໍຂຶ້ນທະບຽນ .......... 10
ມາດຕາ 18 ບັນຊີລາຍຊື່ ແລະ ນາມຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ .......... 10

ພາກທີ IV ຜູ້ໃຫ້ຄຳປຶກສາໃນການຝຶກງານ ---------- 11

ມາດຕາ 19 ສະຖານະ ແລະ ບົດບາດຂອງຜູ້ໃຫ້ຄຳປຶກສາໃນການຝຶກງານ .......... 11
ມາດຕາ 20 ບັນຊີລາຍຊື່ຜູ້ໃຫ້ຄຳປຶກສາໃນການຝຶກງານ .......... 11
ມາດຕາ 21 ໜ້າທີ່ຂອງຜູ້ໃຫ້ຄຳປຶກສາໃນການຝຶກງານ .......... 11
ມາດຕາ 22 ການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ .......... 12
ມາດຕາ 23 ການກຳນົດຜູ້ໃຫ້ຄຳປຶກສາໃນການຝຶກງານ, ບັນຊີລາຍຊື່ຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ .......... 12
ມາດຕາ 24 ຈຳນວນນັກຝຶກງານສູງສຸດ ຕໍ່ຜູ້ໃຫ້ຄຳປຶກສາໃນການຝຶກງານ .......... 12

ພາກທີ V ຜູ້ຄວບຄຸມການຝຶກງານ ---------- 12

ມາດຕາ 25 ສະຖານະ ແລະ ບົດບາດຂອງຜູ້ຄວບຄຸມການຝຶກງານ .......... 12
ມາດຕາ 26 ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ .......... 13
ມາດຕາ 27 ໜ້າທີ່ຂອງຜູ້ຄວບຄຸມການຝຶກງານ .......... 13

ມາດຕາ 28 ກອງປະຊຸມປົກກະຕິກັບນັກຝຶກງານເປັນນັກຊ່ຽວຊານບັນຊີ........14
ມາດຕາ 29 ການສຳພາດສ່ວນບຸກຄົນ ນຳນັກຝຶກງານເປັນນັກຊ່ຽວຊານບັນຊີ........14
ມາດຕາ 30 ບົດລາຍງານການຝຶກງານຂອງຜູ້ຄວບຄຸມການຝຶກງານ........15

ພາກທີ VI ການດຳເນີນການຝຶກງານ —— 15

ມາດຕາ 31 ການເພີ່ມທະວີລະດັບຄວາມຊຳນານງານ........15
ມາດຕາ 32 ການປະເມີນລະດັບຄວາມຊຳນານງານ........15

ພາກທີ VII ເງື່ອນໄຂການລາຍງານ ສຳລັບນັກຝຶກງານເປັນນັກຊ່ຽວຊານບັນຊີ —— 15

ມາດຕາ 33 ການບັນທຶກປະສົບການເຮັດວຽກ........15
ມາດຕາ 34 ແບບຟອມການຝຶກງານປະຈຳປີ........16
ມາດຕາ 35 ບົດລາຍງານການຝຶກງານປະຈຳປີ........16

ພາກທີ VIII ການອອກໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ —— 17

ມາດຕາ 36 ການພິຈາລະນາສຳເລັດການຝຶກງານເປັນນັກຊ່ຽວຊານບັນຊີ........17
ມາດຕາ 37 ການອອກໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ........17

ພາກທີ IX ບົດບັນຍັດສຸດທ້າຍ —— 17

ມາດຕາ 38 ການຈັດຕັ້ງປະຕິບັດ........17
ມາດຕາ 39 ການຕີຄວາມໝາຍ........18
ມາດຕາ 40 ຜົນບັງຄັບໃຊ້........18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ເລກທີ 059/ສວ-ບກລ

# ລະບຽບການ
# ກ່ຽວກັບ ການຝຶກງານເປັນນັກຊ່ຽວຊານບັນຊີ

- ອີງຕາມກົດໝາຍວ່າດ້ວຍການກວດສອບອິດສະລະ ສະບັບເລກທີ 51/ສພຊ ລົງວັນທີ 22 ກໍລະກົດ 2015,
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 3777/ກງ ລົງວັນທີ 2 ພະຈິກ 2015 ວ່າດ້ວຍການອະນຸມັດຈັດຝຶກອົບຮົມວິຊາຊີບການບັນຊີ ຂອງສະພາວິຊາຊີບນັກບັນຊີ ແລະນັກກວດສອບ,

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ລະບຽບການສະບັບນີ້ ກໍານົດຫຼັກການ, ລະບຽບ ແລະ ຂັ້ນຕອນພື້ນຖານ ໃນການຄຸ້ມຄອງການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ການຝຶກງານເປັນນັກຊ່ຽວຊານບັນຊີ (ການຝຶກງານ) ເພື່ອໃຫ້ກາຍເປັນນັກຊ່ຽວຊານບັນຊີ ຕາມກໍານົດໃນ ມາດຕາ 35 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ.

### ມາດຕາ 2 ການຝຶກງານເປັນນັກຊ່ຽວຊານບັນຊີ

ການຝຶກງານເປັນນັກຊ່ຽວຊານບັນຊີ ແມ່ນການໃຫ້ໂອກາດແກ່ນັກຝຶກງານເປັນນັກຊ່ຽວຊານບັນຊີ ນໍາໃຊ້ສິ່ງທີ່ໄດ້ຮຽນຮູ້ທາງການ ຈາກຫຼັກສູດວິຊາຊີບຊ່ຽວຊານບັນຊີ ຕາມກໍານົດໃນມາດຕາ 34 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ ເຂົ້າໃນການເຮັດວຽກຕົວຈິງ ໃນສະຖານທີ່ເຮັດວຽກ ແລະ ໃນການເຮັດກິດຈະກໍາທີ່ກ່ຽວຂ້ອງກັບການສ້າງຄວາມສາມາດດ້ານວິຊາຊີບ ພ້ອມທັງເພື່ອພັດທະນາຄວາມສາມາດດ້ານວິຊາຊີບ ທີ່ຈໍາເປັນສໍາລັບການປະຕິບັດພາລະບົດບາດໃດໜຶ່ງ ຂອງນັກຊ່ຽວຊານບັນຊີ.

ການຝຶກງານເປັນນັກຊ່ຽວຊານບັນຊີ ແມ່ນສ່ວນໜຶ່ງຂອງການຮຽນຮູ້ຢ່າງຕໍ່ເນື່ອງ ທີ່ນັກຊ່ຽວຊານບັນຊີ ມີພັນທະໃນການພັດທະນາ ແລະ ຮັກສາລະດັບຄວາມສາມາດດ້ານວິຊາຊີບ ຜ່ານການຍົກລະດັບວິຊາຊີບແບບຕໍ່ເນື່ອງ ໃນສະພາບແວດລ້ອມການເຮັດວຽກ, ຄວາມກ້າວໜ້າດ້ານວິຊາຊີບ, ຫຼື ພາລະບົດບາດ ໃໝ່ ຊຶ່ງຕ້ອງການໃຫ້ນັກຊ່ຽວຊານບັນຊີ ເພີ່ມລະດັບຄວາມສາມາດດ້ານວິຊາຊີບຂອງຕົນ ພ້ອມທັງມີຄວາມຮູ້ຄວາມສາມາດອັນໃໝ່.

## ມາດຕາ 3 ອະທິບາຍຄຳສັບ

ຄຳສັບຕໍ່ໄປນີ້ ທີ່ໃຊ້ໃນລະບຽບການນີ້ ມີຄວາມໝາຍດັ່ງນີ້:

1. ***ຜູ້ສະໝັກ*** ໝາຍເຖິງບຸກຄົນທີ່ໄດ້ຮັບໃບຢັ້ງຢືນການສອບເສັງຈົບຫຼັກສູດວິຊາຊີບຊ່ຽວຊານບັນຊີ ແລະ ຕ້ອງການຈົດທະບຽນເປັນນັກຝຶກງານເປັນນັກຊ່ຽວຊານບັນຊີ;
2. ***ການເພິ່ງຕົນເອງ*** ໝາຍເຖິງລະດັບຄວາມເປັນເອກະລາດ ຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ ໃນການປະຕິບັດງານຂອງຕົນ.
3. ***ນັກຊ່ຽວຊານບັນຊີ*** (Certified Public Accountants-CPA) ໝາຍເຖິງ ບຸກຄົນທີ່ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຕາມກຳນົດໃນມາດຕາ 37 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ;
4. ***ການຍົກລະດັບວິຊາຊີບແບບຕໍ່ເນື່ອງ*** ໝາຍເຖິງການຮຽນຮູ້ ແລະ ການພັດທະນາ ພາຍຫຼັງການພັດທະນາດ້ານວິຊາຊີບຂັ້ນຕົ້ນ, ຊຶ່ງຈະຊ່ວຍພັດທະນາ ແລະ ຮັກສາລະດັບຄວາມສາມາດດ້ານວິຊາຊີບ ເພື່ອໃຫ້ນັກຊ່ຽວຊານບັນຊີສືບຕໍ່ປະຕິບັດພາລະບົດບາດຂອງຕົນ ຢ່າງມີຄວາມສາມາດ;
5. ***ນັກຝຶກງານເປັນນັກຊ່ຽວຊານບັນຊີ*** ໝາຍເຖິງບຸກຄົນທີ່ໄດ້ຮັບໃບຢັ້ງຢືນການສອບເສັງຈົບຫຼັກສູດວິຊາຊີບຊ່ຽວຊານບັນຊີ ແລະ ຖືກຈົດທະບຽນເປັນນັກຝຶກງານຊ່ຽວຊານບັນຊີ ຕາມຂໍ້ຕົກລົງ ຂອງຄະນະກຳມະການຝຶກອົບຮົມ;
6. ***ຂອບຂ່າຍຄວາມສາມາດໃນການຝຶກງານ*** ໝາຍເຖິງບັນດາຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ ທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີຕ້ອງບັນລຸ ເພື່ອໃຫ້ມີລະດັບຄວາມຊຳນານງານທີ່ພຽງພໍ;
7. ***ຄວາມສະຫຼັບຊັບຊ້ອນ*** ໝາຍເຖິງລະດັບຄວາມຍາກ ທີ່ພົວພັນກັບລະດັບຄວາມຊຳນານງານຂອງບຸກຄົນ;
8. ***ມື້ ແລະ ເດືອນ*** ໝາຍເຖິງ ມື້ ແລະ ເດືອນ ຕາມປະຕິທິນ;
9. ***ຄະນະກຳມະການຝຶກອົບຮົມ*** ໝາຍເຖິງຄະນະກຳມະການ ທີ່ຖືກແຕ່ງຕັ້ງ ຕາມມາດຕາ 18 ຂອງກົດລະບຽບ ຂອງ ສວ-ບກລ;
10. ***ຜູ້ວ່າຈ້າງງານ*** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ພະນັກງານ ໃນການປະຕິບັດກິດຈະກຳຂອງຕົນ ໂດຍຈ່າຍເງິນເດືອນ ຫຼື ຄ່າແຮງງານໃຫ້, ແລະ ສະໜອງຜົນປະໂຫຍດອື່ນ ຕາມທີ່ລະບຸໄວ້ໃນກົດໝາຍ ແລະ ສັນຍາແຮງງານ ຕາມກຳນົດໃນມາດຕາ 3 ຂອງກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ ລົງວັນທີ 24 ທັນວາ 2013;
11. ***ວິສາຫະກິດ*** ໝາຍເຖິງ ວິສາຫະກິດບັນຊີ ແລະ/ຫຼື ກວດສອບ ຕາມກຳນົດໃນມາດຕາ 3 ຂໍ້ທີ 9 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ;
12. ***ສະພາມາດຕະຖານສາກົນດ້ານການສຶກສາວິຊາຊີບການບັນຊີ*** (International Accounting Education Standards Board–IAESB) ໝາຍເຖິງ ອົງການຈັດຕັ້ງເອກະລາດ ພາຍໃຕ້ສະຫະພັນນັກບັນຊີສາກົນ. ສະພາດັ່ງກ່າວ ພັດທະນາມາດຕະຖານດ້ານການສຶກສາ, ຄູ່ມື ແລະ ຄຳແນະນຳໃນການຈັດຕັ້ງປະຕິບັດມາດຕະຖານດັ່ງກ່າວ ເພື່ອໃຫ້ສະມາຊິກຂອງສະຫະພັນນັກບັນຊີສາກົນ (IFAC) ແລະ ພາກສ່ວນກ່ຽວ ຂ້ອງທີ່ສົນໃຈ ນຳໃຊ້ໃນການຝຶກອົບຮົມວິຊາຊີບການບັນຊີ;
13. ***ມາດຕະຖານສາກົນດ້ານການສຶກສາ ທີ 5 (International Education Standard (IES) 5)*** ໝາຍເຖິງມາດຕະຖານດ້ານການສຶກສາວິຊາຊີບບັນຊີ : ການພັດທະນານັກວິຊາຊີບຂັ້ນພື້ນຖານ - ປະ ສົບການໃນການເຮັດວຽກ ທີ່ອອກໂດຍສະພາມາດຕະຖານສາກົນດ້ານການສຶກສາວິຊາຊີບການບັນຊີ;

14. ***ມາດຕະຖານສາກົນດ້ານການສຶກສາ ທີ 6 (International Education Standard (IES) 6)*** ໝາຍເຖິງມາດຕະຖານດ້ານການສຶກສາວິຊາຊີບບັນຊີ : ການພັດທະນານັກວິຊາຊີບຂັ້ນພື້ນຖານ - ຄວາມສາມາດດ້ານວິຊາຊີບ ທີ່ອອກໂດຍສະພາມາດຕະຖານສາກົນ ດ້ານການສຶກສາວິຊາຊີບການບັນຊີ;
15. ***ການຝຶກງານໄລຍະສັ້ນ*** ໝາຍເຖິງ ນັກຮຽນ ຫຼື ນັກຝຶກງານ ທີ່ເຮັດວຽກໃນອົງການຈັດຕັ້ງໃດໜຶ່ງ, ໃນໄລຍະເວລາຕ່ຳກວ່າ 6 ເດືອນ ໂດຍບໍ່ໄດ້ຮັບຄ່າແຮງງານ, ເພື່ອໃຫ້ໄດ້ປະສົບການໃນການເຮັດວຽກ ຫຼື ປະຕິບັດຕາມເງື່ອນໄຂ ສຳລັບການເອົາຄຸນວຸດທິໃດໜຶ່ງ;
16. ***ສະຫະພັນນັກບັນຊີສາກົນ*** (International Federation of Accountants-IFAC) ໝາຍເຖິງ ອົງການຈັດຕັ້ງສາກົນ ສຳລັບວິຊາຊີບການບັນຊີ. ສະຫະພັນນັກບັນຊີສາກົນ ປະກອບດ້ວຍສະມາຊິກສົມບູນ ແລະ ສົມທົບ ທີ່ສ່ວນຫຼາຍເປັນອົງການຈັດຕັ້ງວິຊາຊີບການບັນຊີຂອງແຕ່ລະປະເທດ;
17. ***ກົດໝາຍວ່າດ້ວຍການກວດສອບອິດສະລະ*** ໝາຍເຖິງ ກົດໝາຍວ່າດ້ວຍການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;
18. ***ສວ-ບກລ*** ໝາຍເຖິງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ອົງການຈັດຕັ້ງວິຊາຊີບ ຂອງນັກບັນຊີ ແລະ ນັກກວດສອບ ຂອງ ສປປ ລາວ ທີ່ສ້າງຕັ້ງຂຶ້ນໂດຍກະຊວງການເງິນ ຕາມກຳນົດໃນມາດຕາ 65 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ;
19. ***ກົດລະບຽບຂອງ ສວ-ບກລ*** ໝາຍເຖິງກົດລະບຽບຊົ່ວຄາວຂອງ ສວ-ບກລ ສະບັບລົງວັນທີ 5 ເມສາ ທີ່ຖືກຮັບຮອງຕາມການອະນຸຍາດຂອງກະຊວງການເງິນ;
20. ***ຫຼັກສູດຝຶກອົບຮົມນັກຊ່ຽວຊານບັນຊີ*** ໝາຍເຖິງວຸດທິການສຶກສານັກຊ່ຽວຊານບັນຊີລາວ ທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງລະບຽບການກ່ຽວກັບການເປັນນັກຊ່ຽວຊານບັນຊີລາວ, ຊຶ່ງປະກອບມີ ສອງລະດັບ - ລະດັບພື້ນຖານ ແລະ ລະດັບວິຊາຊີບ: **ລະດັບພື້ນຖານ** ຖືກແບ່ງອອກເປັນສອງພາກ ຄື: ຄວາມຮູ້ ແລະ ຄວາມສາມາດ; ແລະ **ລະດັບວິຊາຊີບ** ຖືກແບ່ງອອກເປັນສອງພາກ ຄື: ພາກທີ່ຈຳເປັນໂດຍພື້ນຖານ (ພາກບັງຄັບ) ແລະ ພາກທີ່ເປັນທາງເລືອກ;
21. ***ສາຍງານໃນການຝຶກງານເປັນນັກຊ່ຽວຊານບັນຊີ*** ໝາຍເຖິງຊຸດວິຊາໃນຂົງເຂດຄວາມສາມາດດ້ານວິຊາຊີບ ຊຶ່ງນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງບັນລຸເພື່ອໃຫ້ໄດ້ປະສົບການເຮັດວຽກຕົວຈິງ ໃນລະດັບຄວາມຊຳນານງານທີ່ຈຳເປັນ ເພື່ອປະຕິບັດພາລະບົດບາດຂອງນັກຊ່ຽວຊານບັນຊີ ທີ່ຕົນໄດ້ຄັດເລືອກ;
22. ***ຫຼັກສູດວິຊາຊີບຊ່ຽວຊານບັນຊີ (Professional Training Program)*** ໝາຍເຖິງຫຼັກສູດວິຊາຊີບຊ່ຽວຊານບັນຊີ ແລະ ການຝຶກງານເປັນນັກຊ່ຽວຊານບັນຊີ ຕາມກຳນົດໃນມາດຕາ 34 ແລະ 35 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ;
23. ***ລະດັບຄວາມຊຳນານງານ (Proficiency level)*** ໝາຍເຖິງລະດັບປະສົບການໃນການເຮັດວຽກ ທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງບັນລຸ ໃນໄລຍະການຝຶກງານ;
24. ***ພາລະບົດບາດຂອງນັກຊ່ຽວຊານບັນຊີ*** ໝາຍເຖິງໜຶ່ງໃນກິດຈະກຳຕ່າງໆ ທີ່ນັກຊ່ຽວຊານບັນຊີອາດປະຕິບັດ ໃນໄລຍະດຳເນີນວິຊາຊີບຂອງຕົນ ຕາມມາດຕະຖານໃດໜຶ່ງທີ່ໄດ້ກຳນົດໄວ້.

## ມາດຕາ 4 ຫຼັກການໃນຄຸ້ມຄອງການຝຶກງານເປັນນັກຊ່ຽວຊານບັນຊີ

ການຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງຖືກຄຸ້ມຄອງໂດຍການປະຕິບັດຕາມຫຼັກການຕໍ່ໄປນີ້:

1. ສອດຄ່ອງກັບມາດຕະຖານ IES 5 ແລະ 6 ທີ່ຈັດພິມເຜີຍແຜ່ໂດຍ IAESB, ແລະ ພາກປະຕິບັດຕົວຈິງທີ່ດີທີ່ສຸດ ໃນປະເທດຕ່າງໆ ທີ່ຖືກຄັດເລືອກ;

2. ຄຳນຶງເຖິງ ຄວາມຄາດຫວັງຂອງສາທາລະນະຊົນ ພ້ອມທັງການສ້າງຄວາມຮູ້ ຈາກສະພາບແວດລ້ອມ ແລະ ສະພາບການພາຍໃນປະເທດ;
3. ປະເມີນຄວາມຕ້ອງການຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ, ຊຶ່ງລວມມີ ການເຂົ້າໃຈພາລະບົດບາດ ທີ່ເຂົາເຈົ້າຄາດຫວັງວ່າຈະປະຕິບັດ ພາຍຫຼັງສຳເລັດຫຼັກສູດຝຶກອົບຮົມວິຊາຊີບນີ້;
4. ສ້າງຂີດຄວາມສາມາດດ້ານວິຊາຊີບ ໃຫ້ແກ່ນັກຝຶກງານເປັນນັກຊ່ຽວຊານບັນຊີ ໃນສະຖານທີ່ເຮັດວຽກ ໃຫ້ມີຄຸນນະພາບສູງ, ໂດຍອາໄສຄວາມສາມາດ ແລະ ຄວາມຮູ້ທີ່ໄດ້ມາຈາກຫຼັກສູດວິຊາຊີບຊ່ຽວຊານບັນຊີ;
5. ອຳນວຍຄວາມສະດວກໃນການພັດທະນາຄຸນຄ່າ, ຈັນຍາບັນ ແລະ ທັດສະນະຄະຕິ ຂອງວິຊາຊີບ ໃນຂະນະທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີ ພັດທະນາສ້າງຕົນໃຫ້ເປັນທີ່ຮັບຮູ້ທາງດ້ານວິຊາຊີບ;
6. ມີຄວາມຢືດຢຸ່ນ, ກ້າວໄປໜ້າ ແລະ ພັດທະນາຕາມການເວລາ ເພື່ອໃຫ້ນັກຝຶກງານເປັນນັກຊ່ຽວຊານບັນຊີທັງໝົດໃນອະນາຄົດ ສາມາດດຳເນີນການຝຶກງານຂອງຕົນ ໃນສະພາບເງື່ອນໄຂ ທີ່ດີທີ່ສຸດທີ່ສາມາດເປັນໄປໄດ້ ຢ່າງມີປະສິດທິຜົນ; ແລະ
7. ມີການປະຢັດຄ່າໃຊ້ຈ່າຍ ເພື່ອຈັດຕັ້ງການຝຶກງານໃຫ້ມີປະສິດທິຜົນ ແລະ ແບບຍືນຍົງໃນຕໍ່ໜ້າ.

## ພາກທີ II
## ການຝຶກງານເປັນນັກຊ່ຽວຊານບັນຊີ

### ມາດຕາ 5 ຂອບເຂດການຝຶກງານເປັນນັກຊ່ຽວຊານບັນຊີ

ການຝຶກງານປະກອບດ້ວຍການເຮັດວຽກດ້ານວິຊາຊີບ ເພື່ອໃຫ້ນັກຝຶກງານເປັນນັກຊ່ຽວຊານບັນຊີ ສາມາດສະແດງວ່າ ຕົນມີຄວາມສາມາດ, ທັກສະ, ແລະ ຄຸນຄ່າ, ຈັນຍາບັນ ແລະ ທັດສະນະຄະຕິ ຂອງວິຊາຊີບ ໃນການປະຕິບັດພາລະບົດບາດຂອງນັກຊ່ຽວຊານບັນຊີ.

ການຝຶກງານຈຳເປັນຕ້ອງສ້າງສະພາບແວດລ້ອມດ້ານວິຊາຊີບ ໃຫ້ນັກຝຶກງານເປັນນັກຊ່ຽວຊານບັນຊີ ພັດທະ ນາຄວາມສາມາດ ດ້ວຍ:

1. ການຮູ້ສະພາບແວດລ້ອມ ໃນການໃຫ້ບໍລິການດັ່ງກ່າວ;
2. ການເພີ່ມຄວາມເຂົ້າໃຈກ່ຽວກັບອົງກອນ, ວິທີການເຮັດທຸລະກິດ, ແລະ ສາຍພົວພັນໃນການເຮັດວຽກຢ່າງເປັນມືອາຊີບ;
3. ຄວາມສາມາດເຊື່ອມສານວຽກງານການບັນຊີ ກັບໜ້າທີ່ ແລະ ກິດຈະກຳຕ່າງໆ ຂອງທຸລະກິດ;
4. ການພັດທະນາຄຸນຄ່າ, ຈັນຍາບັນ ແລະ ທັດສະນະຄະຕິ ດ້ານວິຊາຊີບ ໃນການເຮັດວຽກງານຕົວຈິງ ແລະ ໃນສະພາບການດຳລົງຊີວິດຕົວຈິງ; ແລະ
5. ການມີໂອກາດໃນການສ້າງຄວາມຊຳນານງານໃຫ້ຕົນ ໃນລະດັບທີ່ສູງຂຶ້ນ ຕະຫຼອດໄລຍະການຝຶກງານ ຕາມກຳນົດໃນມາດຕາ 32 ຂອງລະບຽບການສະບັບນີ້.

### ມາດຕາ 6 ຊຸດຝຶກອົບຮົມສະໜັບສະໜູນດ້ານວິຊາຊີບ

ຊຸດຝຶກອົບຮົມສະໜັບສະໜູນດ້ານວິຊາຊີບ ຈະຖືກຈັດເພື່ອຊ່ວຍໃຫ້ມີກິດຈະກຳທີ່ກ່ຽວຂ້ອງ ສໍາລັບສ້າງຄວາມສາມາດດ້ານວິຊາຊີບ ຕາມກຳນົດໃນມາດຕາ 2 ຂອງລະບຽບການສະບັບນີ້. ແຕ່ລະປີ ຄະນະກຳມະການຝຶກອົບຮົມ ຕົກລົງກຳນົດ ແລະ ຮັບຮອງເນື້ອໃນ, ການຈັດຕັ້ງ, ຮູບແບບການປະຕິບັດ ແລະ ກຳນົດເວລາສໍາລັບຊຸດຝຶກອົບຮົມນີ້.

ຈຸດປະສົງຂອງກິດຈະກຳທີ່ກ່ຽວຂ້ອງ ສໍາລັບການໃຫ້ມີຄວາມສາມາດດ້ານວິຊາຊີບນັ້ນ ແມ່ນເພື່ອສະໜອງຄວາມຮູ້ໃນການປະຕິບັດຕົວຈິງ ໃນຂົງເຂດຄວາມສາມາດດ້ານວິຊາຊີບ ຂອງສາຍງານໃນການຝຶກງານເປັນນັກຊ່ຽວຊານບັນຊີ ທີ່ນັກຝຶກງານໄດ້ຄັດເລືອກມາ ແຕ່ບໍ່ສາມາດໄດ້ຄວາມຮູ້ໃນການປະຕິບັດຕົວຈິງນັ້ນ ມາຈາກສະພາບແວດລ້ອມໃນການເຮັດວຽກຂອງຕົນ.

### ມາດຕາ 7 ຂອບຂ່າຍຄວາມສາມາດໃນການຝຶກງານ

ຂອບຂ່າຍຄວາມສາມາດ, ທີ່ປະກອບມີ ຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ, ຕ້ອງຖືກນໍາໃຊ້ເພື່ອກຳນົດຄວາມສາມາດທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີທັງໝົດ ຕ້ອງບັນລຸ ໃນສາມລະດັບຄວາມຊໍານານງານ ຕາມສາຍງານໃນການຝຶກງານ ທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີ ໄດ້ຄັດເລືອກ.

ຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ, ຊຶ່ງກວມເອົາທັງໝົດຫຼັກສູດນັກຊ່ຽວຊານບັນຊີລາວ ຂອງ ສວ-ບກລ, ທີ່ນັກຝຶກງານຕ້ອງຫາປະສົບການໃນການເຮັດວຽກນັ້ນ ຕ້ອງປະກອບມີດັ່ງຕໍ່ໄປນີ້:

1. ການບັນຊີ-ການເງິນ
2. ການລາຍງານການເງິນ;
3. ການກວດສອບ ແລະ ວຽກງານຮັບປະກັນ;
4. ການກວດສອບພາຍໃນ ແລະ ການຄວບຄຸມພາຍໃນ;
5. ການບໍລິຫານການເງິນ;
6. ສ່ວຍສາອາກອນ;
7. ການບັນຊີບໍລິຫານ; ແລະ
8. ຍຸດທະສາດ ແລະ ການຄຸ້ມຄອງບໍລິຫານ ບໍລິສັດ.

ໂດຍອີງຕາມສະຖານະພາບດ້ານວິຊາຊີບຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ໂດຍອີງຕາມການປະກອບຄໍາເຫັນ ຈາກການຈັດຕັ້ງປະຕິບັດລະບຽບການກ່ຽວກັບການຝຶກງານ, ຄະນະກຳມະການຝຶກອົບຮົມ ຕ້ອງສ້າງສາຍງານໃນການຝຶກງານເປັນນັກຊ່ຽວຊານບັນຊີ ເພື່ອໃຫ້ນັກຝຶກງານຄັດເລືອກ ຊຶ່ງລວມມີຂົງເຂດຄວາມສາມາດດ້ານວິຊາຊີບ ທີ່ເປັນພາກບັງຄັບ ແລະ ທີ່ເປັນທາງເລືອກ ໂດຍໃຫ້ສອດຄ່ອງກັບສາຍງານໃນການຝຶກງານ ທີ່ຖືກຄັດເລືອກ.

ລະດັບຄວາມຊໍານານງານ ປະກອບມີດັ່ງຕໍ່ໄປນີ້:

1. ລະດັບພື້ນຖານ: ຜົນໄດ້ຮັບຈາກການຮຽນຮູ້ໃນລະດັບພື້ນຖານ ພົວພັນກັບສະພາບແວດລ້ອມການເຮັດວຽກທີ່ມີລັກສະນະຄຸມເຄືອ, ສະຫຼັບຊັບຊ້ອນ ແລະ ບໍ່ແນ່ນອນ ໃນລະດັບທີ່ຕໍ່າ ເຊັ່ນ:

ກ. ການກຳນົດ, ການອະທິບາຍ, ການສະຫຼຸບສັງລວມ ແລະ ການຕີຄວາມໝາຍ ບັນດາຫຼັກການ ແລະ ທິດສະດີຂັ້ນພື້ນຖານ ກ່ຽວກັບຂົງເຂດຄວາມສາມາດດ້ານວິຊາຊີບ ເພື່ອປະຕິບັດໜ້າວຽກຕ່າງໆໃຫ້ສຳເລັດຜົນ ໃນຂະນະທີ່ເຮັດວຽກພາຍໃຕ້ການຄວບຄຸມ ຊີ້ນຳ ທີ່ເໝາະສົມ;

ຂ. ການປະຕິບັດໜ້າວຽກທີ່ໄດ້ຮັບມອບໝາຍ ໂດຍນຳໃຊ້ຄວາມຮູ້ຄວາມສາມາດດ້ານວິຊາຊີບ ໃຫ້ຖືກຕ້ອງ;

ຄ. ການຮັບຮູ້ຄວາມສຳຄັນຂອງຄຸນຄ່າ, ຈັນຍາບັນ ແລະ ທັດສະນະຄະຕິ ຂອງວິຊາຊີບ ໃນການປະຕິບັດໜ້າວຽກທີ່ໄດ້ຮັບມອບໝາຍ;

ງ. ການແກ້ໄຂບັນຫາທີ່ງ່າຍດາຍ, ການສົ່ງຕໍ່ໜ້າວຽກ ຫຼື ບັນຫາທີ່ສະຫຼັບຊັບຊ້ອນ ໃຫ້ຜູ້ຄຸມງານ ຫຼື ຜູ້ທີ່ມີຄວາມຊຳນານງານສະເພາະດ້ານ; ແລະ

ຈ. ການສະໜອງຂໍ້ມູນຂ່າວສານ ແລະ ການອະທິບາຍແນວຄວາມຄິດ ໃນລັກສະນະທີ່ຈະແຈ້ງ, ໂດຍນຳໃຊ້ການສື່ສານທາງວາຈາ ແລະ ເປັນລາຍລັກອັກສອນ.

2. ລະດັບກາງ: ຜົນໄດ້ຮັບຈາກການຮຽນຮູ້ໃນລະດັບກາງ ພົວພັນກັບສະພາບແວດລ້ອມການເຮັດວຽກທີ່ມີລັກສະນະຄຸມເຄືອ, ສະຫຼັບຊັບຊ້ອນ ແລະ ບໍ່ແນ່ນອນ ໃນລະດັບກາງ ເຊັ່ນ:

ກ. ການປະຕິບັດ, ການສົມທຽບ ແລະ ການວິເຄາະ ຫຼັກການ ແລະ ທິດສະດີຂັ້ນພື້ນຖານ ຈາກຂົງເຂດຄວາມສາມາດດ້ານວິຊາຊີບ ເພື່ອປະຕິບັດວຽກທີ່ໄດ້ຮັບມອບໝາຍໃຫ້ສຳເລັດຜົນ ແລະ ການຕັດສິນໃຈບັນຫາ;

ຂ. ການປະສົມປະສານຄວາມສາມາດດ້ານເຕັກນິກ ແລະ ຄວາມຮູ້ຄວາມສາມາດດ້ານວິຊາຊີບ ເພື່ອເຮັດວຽກທີ່ໄດ້ຮັບມອບໝາຍໃຫ້ສຳເລັດຜົນ ແລະ ຕັດສິນບັນຫາ ຢ່າງເປັນເອກະລາດ;

ຄ. ການນຳໃຊ້ຄຸນຄ່າ, ຈັນຍາບັນ ແລະ ທັດສະນະຄະຕິ ຂອງວິຊາຊີບ ເພື່ອເຮັດວຽກທີ່ໄດ້ຮັບມອບໝາຍ; ແລະ

ງ. ການສະແດງຂໍ້ມູນຂ່າວສານ ແລະ ການອະທິບາຍແນວຄວາມຄິດ ໃນລັກສະນະທີ່ຈະແຈ້ງ, ໂດຍນຳໃຊ້ການສື່ສານທາງວາຈາ ແລະ ເປັນລາຍລັກອັກສອນ ໃຫ້ແກ່ພາກສ່ວນກ່ຽວຂ້ອງກັບການບັນຊີ ແລະ ທີ່ບໍ່ກ່ຽວ ຂ້ອງກັບການບັນຊີ.

3. ລະດັບສູງ: ຜົນໄດ້ຮັບຈາກການຮຽນຮູ້ໃນລະດັບສູງ ພົວພັນກັບສະພາບແວດລ້ອມການເຮັດວຽກທີ່ມີລັກສະນະຄຸມເຄືອ, ສະຫຼັບຊັບຊ້ອນ ແລະ ບໍ່ແນ່ນອນ ໃນລະດັບສູງ ເຊັ່ນ:

ກ. ການຄັດເລືອກ ແລະ ເຊື່ອມສານຫຼັກການ ແລະ ທິດສະດີຈາກຂົງເຂດຄວາມສາມາດຕ່າງໆດ້ານວິຊາຊີບ ເພື່ອຄຸ້ມຄອງບໍລິຫານ ແລະ ນຳພາໂຄງການ ແລະ ວຽກທີ່ໄດ້ຮັບມອບໝາຍ, ແລະ ເພື່ອໃຫ້ຄຳແນະນຳທີ່ ເໝາະສົມກັບຄວາມຕ້ອງການຂອງພາກສ່ວນກ່ຽວຂ້ອງ;

ຂ. ການເຊື່ອມສານຄວາມສາມາດດ້ານເຕັກນິກ ແລະ ຄວາມຮູ້ຄວາມສາມາດດ້ານວິຊາການ ແລະ ການນຳພາໂຄງການ ແລະ ວຽກທີ່ໄດ້ຮັບມອບໝາຍ;

ຄ. ການວິນິໄສແນວທາງປະຕິບັດທີ່ເໝາະສົມກັບຄຸນຄ່າ, ຈັນຍາບັນ ແລະ ທັດສະນະຄະຕິ ຂອງວິຊາຊີບ;

ງ. ການປະເມີນ, ການຄົ້ນຄວ້າ, ແລະ ການແກ້ໄຂບັນຫາຕ່າງໆ ດ້ວຍການຄວບຄຸມທີ່ຈຳກັດ;

ຈ. ການຄາດຄະເນ, ການໃຫ້ຄຳປຶກສາຫາລືທີ່ສອດຄ່ອງ, ແລະ ການພັດທະນາວິທີທາງແກ້ໄຂບັນຫາ ແລະ ແກ້ໄຂກໍລະນີທີ່ສະຫຼັບຊັບຊ້ອນ; ແລະ

ສ. ການສະແດງ ແລະ ອະທິບາຍຂໍ້ມູນຂ່າວສານກ່ຽວຂ້ອງ ຢ່າງສະໝ່ຳສະເໝີ ໃນລັກສະນະທີ່ສ້າງຄວາມເຊື່ອຖື ໃຫ້ແກ່ພາກສ່ວນກ່ຽວຂ້ອງ ຢ່າງກວ້າງຂວາງ.

**ມາດຕາ 8 ກຳນົດໄລຍະເວລາການຝຶກງານ**

ອີງຕາມມາດຕາ 35 ຂອງລະບຽບການສະບັບນີ້, ການກຳນົດໄລຍະເວລາການຝຶກງານ ແມ່ນ ສາມປີ ຫຼື 36 ເດືອນ.

**ມາດຕາ 9 ການເລີ່ມຕົ້ນຝຶກງານ**

ໂດຍອີງຕາມການຂຶ້ນທະບຽນເປັນນັກຝຶກງານເປັນນັກຊ່ຽວຊານບັນຊີ, ການຝຶກງານ ຕ້ອງເລີ່ມຕົ້ນ ນັບແຕ່ມື້ທຳອິດຂອງເດືອນຕໍ່ໄປ ຂອງມື້ທີ່ໄດ້ສົ່ງຄຳຮ້ອງສະໝັກຂຶ້ນທະບຽນເປັນນັກຝຶກງານ.

ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງຍື່ນຄຳຮ້ອງສະໝັກຂຶ້ນທະບຽນເປັນນັກຝຶກງານ ບໍ່ໃຫ້ເກີນໄລຍະເວລາສາມປີ ພາຍຫຼັງມື້ສິ້ນສຸດການຝຶກອົບຮົມວິຊາຊີບຊ່ຽວຊານບັນຊີ ຕາມກຳນົດໃນມາດຕາ 34 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ.

**ມາດຕາ 10 ການຄິດໄລ່ໄລຍະເວລາການຝຶກງານ**

ສຳລັບການຄິດໄລ່ໄລຍະເວລາການຝຶກງານທີ່ກ່ຽວຂ້ອງ, ສາມາດຄິດໄລ່ຈາກການເຮັດວຽກເຕັມເວລາ ຫຼື ໃນການຝຶກງານໄລຍະສັ້ນ ໃນໜຶ່ງ ຫຼື ຫຼາຍປະເພດຫົວໜ່ວຍຕໍ່ໄປນີ້:

1. ວິສາຫະກິດທີ່ມີນັກຊ່ຽວຊານບັນຊີ;
2. ຫົວໜ່ວຍ ທີ່ມີການປະຕິບັດວຽກງານການບັນຊີ ໃນຂະແໜງອຸດສາຫະກຳ, ການຄ້າ ຫຼື ພາກລັດ; ຫຼື
3. ຫົວໜ່ວຍທີ່ມີການບັນຊີ ຫຼື ການບໍລິການທີ່ພົວພັນ ໃນອົງການຈັດຕັ້ງຂອງລັດຖະບານ ຫຼື ທຽບເທົ່າ, ອົງການທີ່ບໍ່ສັງກັດລັດຖະບານ ຫຼື ສະຖານທີ່ເຮັດວຽກທີ່ບໍ່ມີຈຸດປະສົງດ້ານການຄ້າ.

ອະນຸຍາດໃຫ້ມີການເຮັດວຽກເຄິ່ງເວລາ ໃນໜຶ່ງ ຫຼື ຫຼາຍສະຖານທີ່ເຮັດວຽກ. ໃນສະຖານທີ່ເຮັດວຽກໃດໜຶ່ງ ຕ້ອງມີໄລຍະເວລາການເຮັດວຽກ ຢ່າງໜ້ອຍ ພຽງພໍໃນການບັນລຸຈຸດປະສົງ ຂອງການຝຶກງານ ທີ່ຜູ້ຄວບຄຸມ ຫຼື ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ ໄດ້ກຳນົດ.

**ມາດຕາ 11 ການຍົກເວັ້ນການຝຶກງານ**

ອີງຕາມມາດຕາ 36 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ ບຸກຄົນຕໍ່ໄປນີ້ ຖືກຍົກເວັ້ນ ຈາກການຝຶກງານ:

1. ຜູ້ມີປະກາສະນິຍະບັດ ຫຼື ໃບຢັ້ງຢືນ ທີ່ປຶກສາບັນຊີ, ມີປະສົບການເຮັດວຽກດ້ານການບັນຊີ ແລະ ກວດ ສອບຢ່າງໜ້ອຍຫ້າປີຂຶ້ນໄປ ໂດຍຕ້ອງມີຫຼັກຖານຢັ້ງຢືນເປັນລາຍລັກອັກສອນ ທີ່ຖືກຮັບຮອງໂດຍຜູ້ບໍລິຫານ ຂອງສະຖານທີ່ເຮັດວຽກດັ່ງກ່າວ, ໂດຍຊີ້ແຈງໜ້າວຽກ ທີ່ບຸກຄົນກ່ຽວຂ້ອງໄດ້ເຮັດຕາມລະບຽບການສະເພາະຕ່າງຫາກກ່ຽວກັບການຝຶກງານ ທີ່ອອກໂດຍສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
2. ຜູ້ມີໃບຢັ້ງຢືນຊ່ຽວຊານບັນຊີ ຈາກຕ່າງປະເທດ ຊຶ່ງມີຫຼັກສູດການຝຶກງານ ທີ່ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບຮັບຮູ້ໄດ້. ການຢັ້ງຢືນດັ່ງກ່າວ ຕ້ອງເປັນລາຍລັກອັກສອນຈາກອົງການຈັດຕັ້ງວິຊາຊີບ ການ ບັນຊີທີ່ຕົນເປັນສະມາຊິກຢູ່ຕ່າງປະເທດນັ້ນ;

3. ອາຈານສິດສອນວິຊາການບັນຊີ ແລະ ກວດສອບຢ່າງໜ້ອຍສິບປີ ທີ່ສິດສອນຕາມຫຼັກສູດທີ່ສະພາວິຊາ ຊີບນັກບັນຊີ ແລະ ນັກກວດສອບຮັບຮູ້ ແລະ ມີການຢັ້ງຢືນຈາກສະຖາບັນການສຶກສາທີ່ຕົນສິດສອນ;
4. ຜູ້ມີລະດັບການສຶກສາປະລິນຍາໂທ ຫຼື ປະລິນຍາເອກດ້ານການບັນຊີ, ການເງິນ ແລະ ກວດສອບ ແລະ ມີ ປະສົບການກ່ຽວກັບວຽກງານບັນຊີ ແລະ ກວດສອບ ຢ່າງໜ້ອຍ ສິບປີ ທີ່ມີການຢັ້ງຢືນຄວາມສອດຄ່ອງ ຈາກຫົວໜ່ວຍທີ່ຕົນໄດ້ເຮັດວຽກງານບັນຊີ ແລະ ກວດສອບ; ແລະ
5. ສາດສະດາຈານ, ຮອງສາດສະດາຈານ ດ້ານການບັນຊີ, ການເງິນ ແລະ ການກວດສອບ ທີ່ມີການຢັ້ງຢືນໂດຍສະຖາບັນການສຶກສາ ທີ່ຕົນສິດສອນ.

ບຸກຄົນທີ່ມີສິດໄດ້ຮັບການຍົກເວັ້ນການຝຶກງານ ຕ້ອງຍື່ນຄຳຮ້ອງມາຍັງຫ້ອງການຂອງ ສວ-ບກລ ຊຶ່ງເປັນຜູ້ສະໜອງເລກທີ ແລະ ວັນທີຂາເຂົ້າ.

ຄະນະກຳມະການຝຶກອົບຮົມ ຕ້ອງພິຈາລະນາຄຳຮ້ອງດັ່ງກ່າວ ຕາມກຳນົດໃນມາດຕາ 17 ຂອງລະບຽບການສະບັບນີ້.

ພະນັກງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕ້ອງສົ່ງຕໍ່ຄຳຮ້ອງ ຂໍຍົກເວັ້ນການຝຶກງານ ພ້ອມເອກະສານຢັ້ງຢືນ ໃຫ້ຄະນະກຳມະການຝຶກອົບຮົມພິຈາລະນາອະນຸມັດ.

## ມາດຕາ 12 ການຫຼຸດໄລຍະເວລາການຝຶກງານ

ພາຍຫຼັງທີ່ຄະນະກຳມະການຝຶກອົບຮົມກວດກາຄຳຮ້ອງຂໍຫຼຸດໄລຍະການຝຶກງານ ຂອງນັກຝຶກງານເປັນນັກຊ່ຽວຊານບັນຊີແລ້ວ, ຄະນະກຳມະການຝຶກອົບຮົມ ຕ້ອງປະເມີນຫຼັກຖານທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີສະໜອງໃຫ້ ແລະ ສະເໜີຜົນການປະເມີນສຳລັບການຫຼຸດໄລຍະເວລາການຝຶກງານ ໃຫ້ຄະນະບໍລິຫານງານ ສວ-ບກລ ເພື່ອພິຈາລະນາ. ການອະນຸຍາດຫຼຸດໄລຍະເວລາການຝຶກງານ ຕ້ອງບໍ່ໃຫ້ເກີນໄລຍະເວລາສອງປີ.

ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງສະໜອງຫຼັກຖານ ທີ່ສະແດງເຖິງປະສົບການເຮັດວຽກດ້ານວິຊາຊີບ ຢ່າງໜ້ອຍໃນສອງຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ ຂອງຂອບຂ່າຍຄວາມສາມາດ ຕາມສາຍງານໃນການຝຶກງານທີ່ຕົນໄດ້ຄັດເລືອກ. ປະສົບການເຮັດວຽກດັ່ງກ່າວ ຊຶ່ງອາດມີໄລຍະເວລາເຖິງ 36 ເດືອນນັ້ນ ຕ້ອງໄດ້ມາພາຍໃນໄລຍະເວລາ 60 ເດືອນ ກ່ອນມື້ທີ່ໄດ້ຍື່ນຄຳຮ້ອງຂໍຂຶ້ນທະບຽນນັກຝຶກງານເປັນນັກຊ່ຽວຊານບັນຊີ.

ພະນັກງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕ້ອງສົ່ງຕໍ່ການປະກອບຄຳຮ້ອງ ຂໍຫຼຸດໄລຍການຝຶກງານດັ່ງກ່າວ ໃຫ້ຄະນະກຳມະການຝຶກອົບຮົມ ເພື່ອພິຈາລະນາອະນຸມັດ.

ຫຼັກຖານທີ່ຕ້ອງຄັດຕິດມາກັບຄຳຮ້ອງສຳລັບການຂໍຫຼຸດໄລຍະເວລາການຝຶກງານ ອາດລວມມີ ແຕ່ບໍ່ຈຳກັດສິ່ງຕໍ່ໄປນີ້:

1. ສັນຍາວ່າຈ້າງງານ;
2. ໃບບິນການຊຳລະເງິນ;
3. ລາຍລະອຽດໜ້າວຽກ ທີ່ຢັ້ງຢືນໂດຍຜູ້ຈ້າງງານ; ແລະ
4. ໃບຢັ້ງຢືນການວ່າຈ້າງງານ.

ນັກຝຶກງານເປັນນັກຊ່ຽວຊານບັນຊີ ທີ່ໄດ້ຮັບການຫຼຸດໄລຍະການຝຶກງານນັ້ນ, ຕ້ອງປະຕິບັດໃຫ້ສອດຄ່ອງກັບຂໍ້ກຳນົດທັງໝົດ ຂອງລະບຽບການສະບັບນີ້ ຕະຫຼອດໄລຍະການຝຶກງານຂອງຕົນ.

## ມາດຕາ 13 ການໂຈະ ຫຼື ການຍົກເລີກການຝຶກງານ

ຄະນະກຳມະການຝຶກອົບຮົມ ສາມາດໂຈະການຝຶກງານ ຕາມການສະເໜີທີ່ມີຫຼັກຖານຢັ້ງຢືນ ຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ ສຳລັບໄລຍະເວລາ ບໍ່ເກີນ 36 ເດືອນ.

ໃນກໍລະນີທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີ ບໍ່ບັນລຸການປະຕິບັດພັນທະຂອງຕົນ ພາຍໃນກຳນົດເວລາທີ່ໄດ້ວາງໄວ້, ຄະນະກຳມະການຝຶກອົບຮົມ ສາມາດຍົກເລີກການຝຶກງານສ່ວນໜຶ່ງ ຫຼື ທັງໝົດ ຕາມການສະເໜີຂອງຜູ້ຄວບຄຸມການຝຶກງານ ຫຼື ຜູ້ໃຫ້ຄຳປຶກສາໃນການຝຶກງານ.

## ມາດຕາ 14 ທີ່ປຶກສາບັນຊີ ລຸ້ນຜ່ານມາ

ທີ່ປຶກສາການບັນຊີລຸ້ນຜ່ານມາ ທີ່ຢູ່ພາຍໃຕ້ຫຼັກສູດການຍົກລະດັບວິຊາຊີບ ເປັນນັກຊ່ຽວຊານບັນຊີ ຕ້ອງດຳເນີນການຝຶກງານເປັນນັກຊ່ຽວຊານບັນຊີຂອງຕົນ ພຽງແຕ່ ສຳລັບຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ ຂອງຂອບຂ່າຍຄວາມສາມາດ ຕາມທີ່ໄດ້ກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້ ທີ່ຕົນບໍ່ມີປະສົບການເຮັດວຽກທີ່ພຽງພໍ ແລະ ມີສິດສະເໜີຂໍການຫຼຸດໄລຍະການຝຶກງານ.

ຄະນະກຳມະການຝຶກອົບຮົມ ເປັນຜູ້ພິຈາລະນາໄລຍະເວລາທີ່ຈຳເປັນ ເພື່ອໃຫ້ໄດ້ປະສົບການທີ່ຈຳເປັນຕໍ່ຄຳຮ້ອງຂໍຫຼຸດໄລຍະການຝຶກງານດັ່ງກ່າວນັ້ນ.

ທີ່ປຶກສາບັນຊີລຸ້ນຜ່ານມານັ້ນ ຕ້ອງສະໜອງຫຼັກຖານກ່ຽວກັບການຝຶກງານ ໃນຂົງເຂດທີ່ຕົນໄດ້ອ້າງວ່າມີຄວາມຊຳນານງານດ້ານວິຊາຊີບທີ່ຈຳເປັນ ພ້ອມໃບຄຳຮ້ອງ ຕາມທີ່ກຳນົດໃນວັກ 3 ຂອງມາດຕາ 12.

# ພາກທີ III

# ນັກຝຶກງານເປັນນັກຊ່ຽວຊານບັນຊີ

## ມາດຕາ 15 ເງື່ອນໄຂການຂຶ້ນທະບຽນນັກຝຶກງານເປັນນັກຊ່ຽວຊານບັນຊີ

ຜູ້ທີ່ມີສິດຂໍຂຶ້ນທະບຽນເປັນນັກຝຶກງານ ເພື່ອເປັນນັກຊ່ຽວຊານບັນຊີ ແມ່ນຜູ້ສະໝັກທີ່ໄດ້ເງື່ອນໄຂຕໍ່ໄປນີ້:

1. ມີໃບຢັ້ງຢືນຈົບການສອບເສັງຫຼັກສູດວິຊາຊີບຊ່ຽວຊານບັນຊີ ຕາມກຳນົດໃນມາດຕາ 34 ຂອງກົດ ໝາຍວ່າດ້ວຍການກວດສອບອິດສະລະ;
2. ໄດ້ຊຳລະຄ່າຈົດທະບຽນນັກຝຶກງານ.
3. ມີໜັງສືຮັບຮອງຈາກຜູ້ໃຫ້ຄຳປຶກສາໃນການຝຶກງານ ຊຶ່ງຕົນຈະຝຶກງານນຳ ແລະ ໃນກໍລະນີມີການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ ກໍຕ້ອງມີໃບຮັບຮອງຈາກຜູ້ໃຫ້ຄຳປຶກສາໃນການຝຶກງານຜູ້ໃໝ່; ແລະ
4. ຍື່ນໜັງສືປະຕິຍານວ່າຈະປະຕິບັດໃຫ້ສອດຄ່ອງຕາມເງື່ອນໄຂທັງໝົດຂອງລະບຽບການສະບັບນີ້ ພ້ອມທັງ ປະພຶດຕົນ ຢ່າງມີຈັນຍາບັນ, ບໍ່ວ່າໃນສະຖານະການດ້ານວິຊາຊີບໃດກໍ່ຕາມ, ຕາມກຳນົດໃນຈັນຍາບັນ ສຳລັບນັກວິຊາຊີບການບັນຊີ.

### ມາດຕາ 16 ຄຳຮ້ອງສຳລັບຂຶ້ນທະບຽນນັກຝຶກງານເປັນນັກຊ່ຽວຊານບັນຊີ

ພະນັກງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕ້ອງສົ່ງຕໍ່ການປະກອບຄຳຮ້ອງ ຂໍຂຶ້ນທະບຽນນັກຝຶກງານເປັນນັກຊ່ຽວຊານບັນຊີທີ່ໄດ້ຮັບ ໃຫ້ຄະນະກຳມະການຝຶກອົບຮົມ ເພື່ອພິຈາລະນາອະນຸມັດ.

ພະນັກງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ສາມາດສົ່ງຕໍ່ ການປັບປຸງການປະກອບຄຳຮ້ອງດັ່ງກ່າວ ໃຫ້ຄະນະກຳມະການຝຶກອົບຮົມ ເພື່ອພິຈາລະນາອະນຸມັດ.

ຫ້ອງການຂອງ ສວ-ບກລ ຕ້ອງສະໜອງເລກທີ ແລະ ວັນທີຂາເຂົ້າ ໃນການຍື່ນຄຳຮ້ອງຂໍຈົດທະບຽນນັກຝຶກງານເປັນນັກຊ່ຽວຊານບັນຊີ.

### ມາດຕາ 17 ການພິຈາລະນາຄຳຮ້ອງຂໍຂຶ້ນທະບຽນ

ຄະນະກຳມະການຝຶກອົບຮົມ ຕ້ອງປະຊຸມກັນຫຼາຍຄັ້ງເທົ່າທີ່ຈຳເປັນ ເພື່ອພິຈາລະນາຄຳຮ້ອງ ສຳລັບການຂໍຂຶ້ນທະບຽນຂອງຜູ້ສະໝັກ. ກຳນົດເວລາໃນການພິຈາລະນາ ແມ່ນພາຍໃນກຳນົດເວລາ 60 ມື້ ນັບຈາກມື້ທີ່ໄດ້ຈົດຮັບໃບຄຳຮ້ອງຂໍຂຶ້ນທະບຽນ.

ຜົນການພິຈາລະນາຂອງຄະນະກຳມະການຝຶກອົບຮົມ ຕ້ອງຖືກແຈ້ງໃຫ້ ພາຍໃນກຳນົດເວລາ 30 ມື້ ນັບຈາກມື້ມີການພິຈາລະນາ, ດ້ວຍການອອກໜັງສືທາງເອເລັກໂຕຣນິກ (ອີເມລ) ໃຫ້ຜູ້ສະໝັກ, ຜູ້ໃຫ້ຄຳປຶກສາໃນການຝຶກງານ ຫຼື ຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ, ແລະ ຜູ້ຄວບຄຸມການຝຶກງານ ຂອງຜູ້ສະໝັກດັ່ງກ່າວ.

ໃນກໍລະນີມີການປະຕິເສດການຂຶ້ນທະບຽນ, ຜູ້ສະໝັກຂໍຂຶ້ນທະບຽນອາດຍື່ນອຸທອນ ຕໍ່ປະທານ ສວ-ບກລ ພາຍໃນກຳນົດເວລາ 30 ມື້ ນັບຈາກມື້ມີການພິຈາລະນາຕັດສິນ. ປະທານ ສວ-ບກລ ຕ້ອງພິຈາລະນາຕັດສິນພາຍໃນ 60 ມື້ ພາຍຫຼັງໄດ້ຮັບອຸທອນ.

ໃນເວລາຍື່ນອຸທອນ, ຫ້ອງການ ສວ-ບກລ ຕ້ອງອອກເລກທີ ແລະ ວັນທີ ຂອງການຮັບໜັງສືອຸທອນດັ່ງກ່າວ ໃຫ້ຜູ້ຍື່ນອຸທອນ.

### ມາດຕາ 18 ບັນຊີລາຍຊື່ ແລະ ນາມຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ

ຜູ້ສະໝັກທີ່ໄດ້ຮັບອະນຸຍາດ ຕ້ອງຖືກຈົດທະບຽນໃນບັນຊີລາຍຊື່ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕາມກຳນົດໃນມາດຕາ 22, ວັກ 2 ຂອງກົດລະບຽບ ຂອງ ສວ-ບກລ. ຜູ້ສະໝັກທີ່ຖືກຈົດທະບຽນ ມີນາມເປັນນັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ຕ້ອງປະຕິບັດໃຫ້ສອດຄ່ອງກັບມາດຕາ 23 ຂອງກົດລະບຽບ ສວ-ບກລ ແລະ ຂໍ້ກຳນົດ ຂອງລະບຽບການສະບັບນີ້.

# ພາກທີ IV
# ຜູ້ໃຫ້ຄຳປຶກສາໃນການຝຶກງານ

## ມາດຕາ 19 ສະຖານະ ແລະ ບົດບາດຂອງຜູ້ໃຫ້ຄຳປຶກສາໃນການຝຶກງານ

ຜູ້ໃຫ້ຄຳປຶກສາໃນການຝຶກງານ ແມ່ນນັກຊ່ຽວຊານບັນຊີ ທີ່ໃຫ້ການຊີ້ນຳກ່ຽວກັບການພັດທະນາຄວາມສາມາດຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ອຳນວຍຄວາມສະດວກໃນການພັດທະນາຄຸນຄ່າ, ຈັນຍາບັນ ແລະ ທັດສະນະຄະຕິ ຂອງວິຊາຊີບນີ້.

ຜູ້ໃຫ້ຄຳປຶກສາໃນການຝຶກງານ ຕ້ອງໃຫ້ການຮ່ວມມືຢ່າງໃກ້ຊິດກັບນັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ຮູ້ຈັກຄຸນນະພາບວຽກງານຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ.

ຜູ້ໃຫ້ຄຳປຶກສາໃນການຝຶກງານ ຕ້ອງຢູ່ບ່ອນເຮັດວຽກດຽວກັນກັບນັກຝຶກງານເປັນນັກຊ່ຽວຊານບັນຊີ.

## ມາດຕາ 20 ບັນຊີລາຍຊື່ຜູ້ໃຫ້ຄຳປຶກສາໃນການຝຶກງານ

ຄະນະກຳມະການຝຶກອົບຮົມ ຕ້ອງພິຈາລະນາຕົກລົງຮັບຮອງ ຜູ້ໃຫ້ຄຳປຶກສາໃນການຝຶກງານ ທີ່ຜູ້ສະໝັກເປັນນັກຝຶກງານສະເໜີມາ ແລະ ສ້າງບັນຊີລາຍຊື່ນັກຊ່ຽວຊານບັນຊີ ທີ່ສາມາດປະຕິບັດໜ້າທີ່ເປັນຜູ້ໃຫ້ຄຳປຶກສາໃນການຝຶກງານ. ບັນຊີລາຍຊື່ດັ່ງກ່າວ ຕ້ອງໄດ້ຮັບການປັບປຸງເປັນແຕ່ລະປີ ແລະ ເຜີຍແຜ່ຕໍ່ສາທາລະນະ ໂດຍຫ້ອງການ ສວ-ບກລ.

## ມາດຕາ 21 ໜ້າທີ່ຂອງຜູ້ໃຫ້ຄຳປຶກສາໃນການຝຶກງານ

ຜູ້ໃຫ້ຄຳປຶກສາໃນການຝຶກງານມີໜ້າທີ່ດັ່ງນີ້:

1. ຮ່ວມມືກັບນັກຝຶກງານເປັນນັກຊ່ຽວຊານບັນຊີ ໃນການກຳນົດຍຸດທະສາດໃນການສາ້ງລະດັບຄວາມຊຳນານງານທີ່ຈຳເປັນ ຕາມກຳນົດໃນມາດຕາ 32 ຂອງລະບຽບການສະບັບນີ້ ຕະຫຼອດໄລຍະເວລາຂອງການຝຶກງານ;
2. ກຳນົດເວລາທີ່ພຽງພໍ ເພື່ອໃຫ້ຕົນສາມາດຊີ້ນຳນັກຝຶກງານ ໃນການສ້າງລະດັບຄວາມຊຳນານງານທີ່ຈຳເປັນໃນຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ ຂອງສາຍງານໃນການຝຶກງານເປັນນັກຊ່ຽວຊານບັນຊີ ຕາມກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້;
3. ປະຊຸມກັບນັກຝຶກງານ ຫຼາຍຄັ້ງເທົ່າທີ່ຈຳເປັນ ເພື່ອສົນທະນາກ່ຽວກັບການພັດທະນາຄວາມສາມາດ ຕາມທີ່ໄດ້ຈົດບັນທຶກໃນແບບຟອມການຝຶກງານປະຈຳປີ ຕາມກຳນົດໃນມາດຕາ 33 ຂອງລະບຽບການສະບັບນີ້;
4. ຮ່ວມມື ແລະ ປະສານງານກັບຜູ້ຄວບຄຸມການຝຶກງານ ແລະ ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ;
5. ຢືນຢັນກຳນົດເວລາທີ່ກ່ຽວພັນ ທີ່ຕ້ອງໄດ້ພິຈາລະນາໃນການຄິດໄລ່ໄລຍະການຝຶກງານໃຫ້ຄົບ 36 ເດືອນ;
6. ຊ່ວຍນັກຝຶກງານເປັນນັກຊ່ຽວຊານບັນຊີ ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ຈາກການສ້າງສາຍພົວພັນດ້ານວິຊາຊີບ ຜ່ານປະສົບການ ແລະ ຄວາມເຂົ້າໃຈ ຂອງສະພາບແວດລ້ອມຂອງການເຮັດວຽກ ຂອງເຂົາເຈົ້າ.

**ມາດຕາ 22 ການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ**

ນັກຝຶກງານເປັນນັກຊ່ຽວຊານບັນຊີ ອາດປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານຂອງຕົນ ໃນໄລຍະດຳເນີນການຝຶກງານ ຖ້າຕົນເຫັນວ່າຈຳເປັນ ເພື່ອບັນລຸລະດັບຄວາມຊຳນານງານທີ່ຈຳເປັນ ໃນຂົງເຂດຄວາມສາມາດດ້ານວິຊາຊີບ ຂອງຂອບຂ່າຍຄວາມສາມາດ ຕາມກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້.

ການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ ຕ້ອງບໍ່ຂັດຈັງຫວະໃນການຝຶກງານ.

ກ່ອນມື້ການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານມີຜົນບັງຄັບໃຊ້, ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງລາຍງານການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ ໃຫ້ແກ່ຜູ້ຄວບຄຸມການຝຶກງານ. ນັກຝຶກງານດັ່ງກ່າວ ຕ້ອງຊີ້ແຈງໃນບົດລາຍງານ ເຫດຜົນການປ່ຽນຜູ້ໃຫ້ຄຳປຶກສາໃນການຝຶກງານ ແລະ ມື້ຂອງການປ່ຽນດັ່ງກ່າວ. ບົດລາຍງານນີ້ຕ້ອງສົ່ງພາຍໃນ 30 ມື້ ກ່ອນມື້ຂອງການປ່ຽນແປງດັ່ງກ່າວ.

**ມາດຕາ 23 ການກຳນົດຜູ້ໃຫ້ຄຳປຶກສາໃນການຝຶກງານ, ບັນຊີລາຍຊື່ຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ**

ຜູ້ສະໝັກຈົດທະບຽນເປັນນັກຝຶກງານ ເພື່ອເປັນນັກຊ່ຽວຊານບັນຊີ ຕ້ອງຮັບຜິດຊອບໃນການກຳນົດຜູ້ໃຫ້ຄຳປຶກສາໃນການຝຶກງານຂອງຕົນ.

ຖ້າຜູ້ສະໝັກບໍ່ສາມາດຊອກຜູ້ໃຫ້ຄຳປຶກສາໃນການຝຶກງານ ພາຍຫຼັງທີ່ຕົນໄດ້ພະຍາຍາມຢ່າງສົມເຫດສົມຜົນແລ້ວ, ຕົນອາດສະເໜີຂໍຝຶກງານ ພາຍໃຕ້ການຄວບຄຸມ ຂອງຜູ້ຊ່ວຍຜູ້ຄວບຄຸມການຝຶກງານໃດໜຶ່ງ ຊຶ່ງຈະຮັບບົດບາດເປັນຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ.

ຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ ຕ້ອງຖືກຄັດເລືອກຈາກບັນຊີລາຍຊື່ ທີ່ຄະນະກຳມະການຝຶກອົບຮົມໄດ້ສ້າງຂຶ້ນ. ໃນກໍລະນີດັ່ງກ່າວ, ນັກຝຶກງານເປັນນັກຊ່ຽວຊານບັນຊີ ພ້ອມດ້ວຍຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກຂອງຕົນ ຕ້ອງກຳນົດຍຸດທະສາດ ທີ່ຖືກດັດປັບ ເພື່ອໃຫ້ໄດ້ຮັບລະດັບຄວາມຊຳນານງານທີ່ຈຳເປັນ ໃນສະພາບການເຮັດວຽກຂອງເຂົາເຈົ້າ.

**ມາດຕາ 24 ຈຳນວນນັກຝຶກງານສູງສຸດ ຕໍ່ຜູ້ໃຫ້ຄຳປຶກສາໃນການຝຶກງານ**

ຄະນະກຳມະການຝຶກອົບຮົມ ເປັນຜູ້ກຳນົດຈຳນວນນັກຝຶກງານສູງສຸດ ຕໍ່ຜູ້ໃຫ້ຄຳປຶກສາໃນການຝຶກງານ ຫຼືຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ ເປັນແຕ່ລະໄລຍະ ໂດຍອີງໃສ່ຜົນການປະເມີນການພັດທະນາວິຊາຊີບການບັນຊີ ພ້ອມທັງສະພາບເສດຖະກິດແຫ່ງຊາດ ແລະ ການປະກອບຄຳເຫັນຈາກການຈັດຕັ້ງປະຕິບັດລະບຽບການກ່ຽວກັບການຝຶກງານສະບັບນີ້.

## ພາກທີ V

## ຜູ້ຄວບຄຸມການຝຶກງານ

**ມາດຕາ 25 ສະຖານະ ແລະ ບົດບາດຂອງຜູ້ຄວບຄຸມການຝຶກງານ**

ຜູ້ຄວບຄຸມການຝຶກງານ ແມ່ນນັກຊ່ຽວຊານບັນຊີ, ສະມາຊິກຂອງຄະນະກຳມະການຝຶກອົບຮົມ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຈາກຄະນະກຳມະການຝຶກອົບຮົມ ເປັນວາລະສາມປີ ແລະ ສາມາດຕໍ່ວາລະໄດ້.

ຜູ້ຄວບຄຸມການຝຶກງານຕ້ອງໃຫ້ການສະໜັບສະໜູນດ້ານການຊີ້ນຳ ໃຫ້ນັກຝຶກງານເປັນນັກຊ່ຽວຊານບັນຊີ ໂດຍການຊີ້ນຳ, ແນະນຳ, ແລະ ຊ່ວຍເຂົາເຈົ້າ ເພື່ອໃຫ້ມີປະສົບການເຮັດວຽກທີ່ພຽງພໍ.

ຜູ້ຄວບຄຸມການຝຶກງານ ຕ້ອງປະເມີນປະສົບການເຮັດວຽກ ທີ່ນັກຝຶກງານໄດ້ຮັບ ຕາມສາມລະດັບຄວາມຊຳນານງານດ້ານວິຊາຊີບ ທີ່ໄດ້ກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້.

ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງລາຍງານໃຫ້ຜູ້ຄວບຄຸມການຝຶກງານ.

ຜູ້ຄວບຄຸມການຝຶກງານ ຕ້ອງຮັບປະກັນວ່າ ທຸກອົງປະກອບ ແລະ ການເຄື່ອນໄຫວວຽກງານ ທີ່ຈຳເປັນສຳລັບການປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນນັ້ນ ແມ່ນສາມາດດຳເນີນການໄດ້ ຢ່າງແທດເໝາະ.

## ມາດຕາ 26 ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ

ເພື່ອຊ່ວຍຜູ້ຄວບຄຸມການຝຶກງານ ໃນການປະຕິບັດໜ້າທີ່ຂອງຕົນຢ່າງແທດເໝາະ, ຄະນະກຳມະການຝຶກອົບຮົມ ສາມາດແຕ່ງຕັ້ງ ຜູ້ຊ່ວຍຜູ້ຄວບຄຸມການຝຶກງານໄດ້ໜຶ່ງ ຫຼື ຫຼາຍຄົນ ໃນວາລະດຽວກັນກັບຜູ້ຄວບຄຸມການຝຶກງານ.

ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ ຕ້ອງລາຍງານກ່ຽວກັບກິດຈະກຳຂອງຕົນ ໃຫ້ແກ່ຜູ້ຄວບຄຸມການຝຶກງານໃຫ້ທັນກຳນົດເວລາ.

ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ ອາດມີບົດບາດເປັນຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ ຕາມກຳນົດໃນມາດຕາ 23 ຂອງລະບຽບການສະບັບນີ້. ໃນກໍລະນີນີ້, ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ ບໍ່ສາມາດຮັບຜິດຊອບເປັນຜູ້ຕິດຕາມກວດການັກຝຶກງານເປັນນັກຊ່ຽວຊານບັນຊີ ທີ່ຕົນເປັນຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ.

ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ, ຍົກເວັ້ນຜູ້ທີ່ເປັນຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ, ບໍ່ຈຳເປັນແມ່ນນັກຊ່ຽວຊານບັນຊີ ຫຼື ສະມາຊິກຂອງຄະນະກຳມະການຝຶກອົບຮົມ ແຕ່ຕ້ອງມີຄວາມຮູ້ລົງເລິກ ກ່ຽວກັບສິ່ງຕໍ່ໄປນີ້:

1. ວຽກຂອງນັກຊ່ຽວຊານບັນຊີ; ແລະ
2. ຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ ໃນຂອບຂ່າຍຄວາມສາມາດ ທີ່ໄດ້ກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້.

## ມາດຕາ 27 ໜ້າທີ່ຂອງຜູ້ຄວບຄຸມການຝຶກງານ

ໜ້າທີ່ຂອງຜູ້ຄວບຄຸມການຝຶກງງານ ມີດັ່ງນີ້:

1. ປະເມີນການອອກແບບ ແລະ ການຈັດຕັ້ງການຝຶກງານຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ;
2. ຕິດຕາມກວດກາ ການປະຕິບັດພັນທະ ຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ;
3. ປະເມີນຄຸນນະພາບ, ຂອບເຂດ ແລະ ຄວາມຫຼາກຫຼາຍຂອງວຽກງານທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີ ໄດ້ປະຕິບັດ;
4. ປະເມີນລະດັບ ແລະ ຄຸນນະພາບ ຂອງລະດັບຄວາມຊຳນານງານ ທີ່ໄດ້ບັນລຸ;

5. ປະຊຸມກັບນັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ຜູ້ໃຫ້ຄໍາປຶກສາໃນການຝຶກງານຂອງເຂົາເຈົ້າ ເພື່ອແກ້ໄຂບັນຫາທີ່ອາດເກີດຂຶ້ນ ໃນໄລຍະການດໍາເນີນການຝຶກງານ;
6. ກວດກາການເຂົ້າຮ່ວມຊຸດຝຶກອົບຮົມວິຊາຊີບ ຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ ຕາມກໍານົດໃນມາດຕາ 6 ຂອງລະບຽບການສະບັບນີ້;
7. ກວດກາການສົ່ງແບບຟອມການຝຶກງານປະຈໍາປີ ແລະ ບົດລາຍງານການຝຶກງານປະຈໍາປີ ແລະ ເອກະສານທີ່ກ່ຽວຂ້ອງ ຕາມກໍານົດເວລາ.

ຜູ້ຄວບຄຸມການຝຶກງານອາດມອບໝາຍໜ້າທີ່ຂອງຕົນໃຫ້ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ. ໃນກໍລະນີດັ່ງກ່າວ ຜູ້ຊ່ວຍຜູ້ຄວບຄຸມການຝຶກງານຕ້ອງລາຍງານໃຫ້ຜູ້ຄວບຄຸມການຝຶກງານ ກ່ຽວກັບວຽກທີ່ໄດ້ປະຕິບັດໃນຂອບເຂດໜ້າທີ່ ທີ່ຕົນໄດ້ຮັບມອບໝາຍ.

## ມາດຕາ 28 ກອງປະຊຸມປົກກະຕິກັບນັກຝຶກງານເປັນນັກຊ່ຽວຊານບັນຊີ

ຜູ້ຄວບຄຸມການຝຶກງານ ຕ້ອງຮຽກກອງປະຊຸມເປັນຮອບວຽນປະຈໍາ ເພື່ອ:

1. ຊຸກຍູ້ໃຫ້ມີການຮອບຮອມປະສົບການໃນບັນດານັກຝຶກງານເປັນນັກຊ່ຽວຊານບັນຊີ;
2. ໄຈ້ແຍກບັນຫາໃນການດໍາເນີນການຝຶກງານ; ແລະ
3. ເສີມຄວາມຮູ້ໃຫ້ ຊຶ່ງໄດ້ມາຈາກຊຸດຝຶກອົບຮົມວິຊາຊີບ ທີ່ໄດ້ກໍານົດໃນມາດຕາ 6 ຂອງລະບຽບການສະບັບນີ້ ໂດຍການຍົກຕົວຢ່າງໃນໂລກແຫ່ງຄວາມເປັນຈິງ.

ຕ້ອງມີການແຈ້ງນັກຝຶກງານເປັນນັກຊ່ຽວຊານບັນຊີ ກ່ຽວກັບການຈັດກອງປະຊຸມໃຫຍ່ ທີ່ເປັນຮອບວຽນປະຈໍາດັ່ງກ່າວ ໃຫ້ກ່ອນມື້ປະຊຸມ 30 ວັນ.

## ມາດຕາ 29 ການສໍາພາດສ່ວນບຸກຄົນ ນໍານັກຝຶກງານເປັນນັກຊ່ຽວຊານບັນຊີ

ຜູ້ຄວບຄຸມການຝຶກງານ ແລະ/ຫຼື ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ ຕ້ອງຮຽກເອີ້ນນັກຝຶກງານເປັນນັກຊ່ຽວຊານບັນຊີແຕ່ລະຄົນມາສໍາພາດ ຢ່າງໜ້ອຍປີລະຄັ້ງ ເພື່ອ:

1. ປະເມີນການອອກແບບ ແລະ ການຈັດຕັ້ງການຝຶກງານ ທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີ ໄດ້ສະເໜີ ໂດຍຄໍານຶງເຖິງຫົວຂໍ້ດ້ານວິຊາຊີບຫຼັກທີ່ນັກຝຶກງານນັ້ນໄດ້ຄັດເລືອກ;
2. ລາຍງານຄວາມຄືບໜ້າຂອງການຝຶກງານ;
3. ປະເມີນປະສົບການເຮັດວຽກຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ ຕາມສາມລະດັບຄວາມຊໍານານງານ ທີ່ໄດ້ກໍານົດໃນມາດຕາ 32 ຂອງລະບຽບການສະບັບນີ້;
4. ແນະນໍານັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ຕອບຄໍາຖາມຂອງເຂົາເຈົ້າ; ແລະ
5. ຖ້າຈໍາເປັນ, ຮຽກເອີ້ນເພື່ອປັບທິດການຝຶກງານຄືນໃໝ່.

ຕ້ອງມີການແຈ້ງນັກຝຶກງານເປັນນັກຊ່ຽວຊານບັນຊີ ກ່ຽວກັບການສໍາພາດສ່ວນບຸກຄົນດັ່ງກ່າວ ກ່ອນມື້ສໍາພາດ 30 ວັນ.

ຕ້ອງມີການເຮັດບົດບັນທຶກການສໍາພາດສ່ວນບຸກຄົນນໍານັກຝຶກງານເປັນນັກຊ່ຽວຊານບັນຊີດັ່ງກ່າວ ແລະ ສົ່ງໜັງສືໃຫ້ຜູ້ໃຫ້ຄໍາປຶກສາໃນການຝຶກງານ ແລະ ນັກຝຶກງານເປັນນັກຊ່ຽວຊານບັນຊີ ພາຍໃນ 30 ມື້ຫຼັງມີການສໍາພາດ.

**ມາດຕາ 30 ບົດລາຍງານການຝຶກງານຂອງຜູ້ຄວບຄຸມການຝຶກງານ**

ຜູ້ຄວບຄຸມການຝຶກງານຕ້ອງຮ່າງບົດລາຍງານປະຈຳປີ ກ່ຽວກັບກິດຈະກຳການຄວບຄຸມການຝຶກງານ.

ບົດລາຍງານຕ້ອງລະບຸກິດຈະກຳທີ່ໄດ້ປະຕິບັດ, ລາຍການບັນຫາທີ່ໄດ້ຍົກຂຶ້ນມາ ແລະ ການໃຫ້ຄຳແນະນຳ. ບົດລາຍງານນີ້ ຕ້ອງສົ່ງໃຫ້ຄະນະກຳມະການຝຶກອົບຮົມ ພາຍໃນ 180 ມື້ ຫຼັງສິ້ນສຸດປີການລາຍງານດັ່ງກ່າວ.

ພາຍຫຼັງຄະນະກຳມະການຝຶກອົບຮົມໄດ້ຮັບຮອງບົດລາຍງານ, ຕ້ອງສົ່ງໃຫ້ສະພາບໍລິຫານງານຊາບ ແລະ ຈັດພິມລົງເວັບໄຊດ໌ຂອງ ສວ-ບກລ.

## ພາກທີ VI

## ການດຳເນີນການຝຶກງານ

**ມາດຕາ 31 ການເພີ່ມທະວີລະດັບຄວາມຊຳນານງານ**

ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງອອກແບບ ແລະ ຈັດຕັ້ງການຝຶກງານຂອງຕົນ ດ້ວຍວິທີທາງທີ່ຮັບປະກັນຄວາມກ້າວໜ້າໃນຄວາມຊຳນານງານ ຕະຫຼອດໄລຍະການຝຶກງານ.

ການອອກແບບ ແລະ ການຈັດຕັ້ງການຝຶກງານ, ຕ້ອງສະແດງໃຫ້ເຫັນວ່າ ຕະຫຼອດໄລຍະການຝຶກງານ ນັກຝຶກງານເປັນນັກຊ່ຽວຊານບັນຊີ ຈະໄດ້ຮັບ ແລະ ໄດ້ຮັບລະດັບຄວາມຊຳນານງານ ໃນຂົງເຂດຄວາມສາມາດດ້ານວິຊາຊີບ ຂອງຂອບຂ່າຍຄວາມສາມາດດ້ານວິຊາຊີບ ທີ່ໄດ້ກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້ ຊຶ່ງໄດ້ກຳນົດໃຫ້ມີການຄັດເລືອກສາຍງານໃນການຝຶກງານ.

**ມາດຕາ 32 ການປະເມີນລະດັບຄວາມຊຳນານງານ**

ການປະເມີນລະດັບຄວາມຊຳນານງານ ທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີໄດ້ມາ ຕ້ອງອີງໃສ່ ຄວາມສະຫຼັບຊັບຊ້ອນ, ສະພາບການ ແລະ ຄວາມເປັນເອກະລາດ ທີ່ເປັນອົງປະກອບຂອງ ສາມລະດັບຄວາມຊຳນານງານ ໃນຂອບຂ່າຍຄວາມສາມາດໃນການຝຶກງານ ທີ່ໄດ້ກຳນົດໃນມາດຕາ 7 ຂອງລະບຽບການສະບັບນີ້.

## ພາກທີ VII

## ເງື່ອນໄຂການລາຍງານ ສຳລັບນັກຝຶກງານເປັນນັກຊ່ຽວຊານບັນຊີ

**ມາດຕາ 33 ການບັນທຶກປະສົບການເຮັດວຽກ**

ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງບັນທຶກປະສົບການ ແລະ ລະດັບຄວາມຊຳນານງານ ທີ່ຕົນໄດ້ມາ ຕາມກຳນົດໃນມາດຕາ 32 ຂອງລະບຽບການສະບັບນີ້. ນັກຝຶກງານນັ້ນ ຕ້ອງບັນທຶກຂໍ້ມູນຂ່າວສານ ໃນໃບບັນທຶກປະສົບການເຮັດວຽກ ທີ່ອອກແບບໂດຍຄະນະກຳມະການຝຶກອົບຮົມ ທີ່ຫ້ອງການ ສວ-ບກລ ສະໜອງໃຫ້.

ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງບັນທຶກ:

1. ໄລຍະເວລາປະສົບການ ໃນຂົງເຂດຄວາມສາມາດດ້ານວິຊາຊີບຫຼັກ ຂອງສາຍງານໃນການຝຶກງານເປັນນັກຊ່ຽວຊານບັນຊີ ທີ່ຕົນໄດ້ຄັດເລືອກ;

2. ຂໍ້ມູນຂ່າວສານກ່ຽວກັບຜູ້ວ່າຈ້າງງານຕົນ;
3. ຕຳແໜ່ງງານ ແລະ ນາມຂອງຕົນ; ແລະ
4. ການປະເມີນດ້ວຍຕົນເອງ ລະດັບຄວາມຊຳນານງານ ທີ່ຕົນໄດ້ບັນລຸ.

ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງສົ່ງໃບບັນທຶກປະສົບການເຮັດວຽກ ໃຫ້ຜູ້ຄວບຄຸມການຝຶກງານ ແລະ/ຫຼື ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ ໃນໄລຍະສຳພາດສ່ວນບຸກຄົນ ຕາມກຳນົດໃນມາດຕາ 28 ຂອງລະບຽບການສະບັບນີ້ ເພື່ອເປັນພື້ນຖານໃນການສົນທະນາປຶກສາຫາລືກັນ.

**ມາດຕາ 34 ແບບຟອມການຝຶກງານປະຈຳປີ**

ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງປະກອບແບບຟອມການຝຶກງານປະຈຳປີ ຊຶ່ງຖືເປັນບົດລາຍງານການຝຶກງານປະຈຳປີ ທີ່ຄະນະກຳມະການຝຶກອົບຮົມອອກແບບມາ ຊຶ່ງຫ້ອງການ ສວ-ບກລ ຢາຍໃຫ້.

ແບບຟອມການຝຶກງານ ສະແດງລາຍການ ແລະ ລາຍລະອຽດວຽກງານທີ່ໄດ້ປະຕິບັດໃນປີທີ່ລາຍງານ ພ້ອມທັງຊຸດຝຶກອົບຮົມວິຊາຊີບ ທີ່ນັກຝຶກງານເປັນນັກຊ່ຽວຊານບັນຊີໄດ້ເຂົ້າຮ່ວມ. ສາມາດມີການຄັດຕິດເອກະສານຊ້ອນທ້າຍ ທີ່ອະທິບາຍວຽກທີ່ໄດ້ເຮັດ ນຳແບບຟອມດັ່ງກ່າວໄດ້.

ຜູ້ໃຫ້ຄຳປຶກສາໃນການຝຶກງານ ແລະ ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງເຊັນແບບຟອມດັ່ງກ່າວກ່ອນທີ່ນັກຝຶກງານຈະສົ່ງໃຫ້ຫ້ອງການ ສວ-ບກລ ເພື່ອສົ່ງຕໍ່ໃຫ້ຜູ້ຄວບຄຸມການຝຶກງານ ຫຼື ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ ພາຍໃນ 90 ວັນ ຫຼັງສິ້ນສຸດປີທີ່ຕ້ອງສົ່ງແບບຟອມດັ່ງກ່າວ.

ໃນກໍລະນີ ດັ່ງທີ່ໄດ້ກຳນົດໃນວັກ 2 ຂອງມາດຕາ 23 ຂອງລະບຽບການສະບັບນີ້, ຜູ້ໃຫ້ຄຳປຶກສາໃນການຝຶກງານຈາກພາຍນອກ ແລະ ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງເຊັນແບບຟອມການຝຶກງານດັ່ງກ່າວ. ໃນກໍລະນີນີ້, ຖືວ່າຜູ້ຄວບຄຸມການຝຶກງານ ຫຼື ຜູ້ຊ່ວຍຜູ້ຄວບຄຸມການຝຶກງານ ໄດ້ຮັບການປະກອບແບບຟອມດັ່ງກ່າວ.

**ມາດຕາ 35 ບົດລາຍງານການຝຶກງານປະຈຳປີ**

ເພື່ອປະເມີນລະດັບຄວາມຊຳນານງານດ້ານວິຊາຊີບ ທີ່ໄດ້ບັນລຸ, ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງລາຍງານເປັນປະຈຳທຸກປີ ກ່ຽວກັບວຽກງານສະເພາະ ຊຶ່ງອາດເປັນໜຶ່ງ ຫຼື ຫຼາຍວຽກ ທີ່ຕົນໄດ້ປະຕິບັດໃນໄລຍະປີທີ່ຕົນຕ້ອງລາຍງານ.

ຜູ້ໃຫ້ຄຳປຶກສາໃນການຝຶກງານ ແລະ ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງເຊັນບົດລາຍງານນີ້, ຈາກນັ້ນນັກຝຶກງານຕ້ອງສົ່ງໃຫ້ຫ້ອງການ ສວ-ບກລ ເພື່ອສົ່ງຕໍ່ໃຫ້ຜູ້ຄວບຄຸມການຝຶກງານ ຫຼື ຜູ້ຊ່ວຍຄວບຄຸມການຝຶກງານ ທີ່ກ່ຽວຂ້ອງ ພາຍໃນກຳນົດເວລາດຽວກັນ ທີ່ໄດ້ກຳນົດໃນວັກທີ ສາມຂອງມາດຕາ 34 ຂ້າງເທິງ.

ໃນກໍລະນີທີ່ກຳນົດໃນວັກ 2 ຂອງມາດຕາ 23 ໃນລະບຽບການສະບັບນີ້, ຂັ້ນຕອນດຳເນີນການ ຕ້ອງແມ່ນແບບດຽວກັນກັບ ສຳລັບບົດລາຍງານການຝຶກງານປະຈຳປີ ຕາມທີ່ໄດ້ລະບຸໄວ້ ໃນວັກສຸດທ້າຍ ຂອງມາດຕາ 34 ຂ້າງເທິງ.

## ພາກທີ VIII
## ການອອກໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ

### ມາດຕາ 36 ການພິຈາລະນາສໍາເລັດການຝຶກງານເປັນນັກຊ່ຽວຊານບັນຊີ

ພາຍຫຼັງສິ້ນສຸດໄລຍະການຝຶກງານສາມປີ, ຄະນະກໍາມະການຝຶກອົບຮົມ ຕ້ອງປະເມີນຄຸນນະພາບ ແລະ ຄວາມສອດຄ່ອງ ຂອງການຝຶກງານເປັນນັກຊ່ຽວຊານບັນຊີ. ໃນການປະເມີນ ຄະນະດັ່ງກ່າວ ອາດພິຈາລະນາ ດັ່ງຕໍ່ໄປນີ້:

1. ຢັ້ງຢືນຄວາມຖືກຕ້ອງຂອງການຝຶກງານເປັນນັກຊ່ຽວຊານບັນຊີ ແລະ ອອກໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ;
2. ຕໍ່ໄລຍະເວລາການຝຶກງານ ດ້ວຍກໍານົດເວລາ ທີ່ເຫັນວ່າຈໍາເປັນເພື່ອໃຫ້ບັນລຸລະດັບຄຸນນະພາບ ແລະ ຄວາມສອດຄ່ອງ ທີ່ພຽງພໍ;
3. ຢັ້ງຢືນບໍ່ຮັບຮູ້ການຝຶກງານເປັນນັກຊ່ຽວຊານບັນຊີທັງໝົດຜ່ານມາ. ໃນກໍລະນີນີ້ ນັກຝຶກງານເປັນນັກຊ່ຽວຊານບັນຊີ ຕ້ອງໄດ້ຮັບອະນຸຍາດໃຫ້ເລີ່ມຕົ້ນໄລຍະເວລາການຝຶກງານຄືນໃໝ່ໝົດ, ຊຶ່ງຕ້ອງບໍ່ຕໍ່າກວ່າພາຍໃນສາມປີ ນັບຈາກມື້ມີການພິຈາລະນາຕັດສິນຂອງຄະນະກໍາມະການຝຶກອົບຮົມ.

ນັກຝຶກງານເປັນນັກຊ່ຽວຊານບັນຊີ ອາດຂໍອຸທອນຕໍ່ປະທານ ສວ-ບກລ ພາຍໃນເວລາ 30 ມື້ ຫຼັງການພິຈາລະນາຕັດສິນຂອງຄະນະກໍາມະການຝຶກອົບຮົມ. ປະທານ ສວ-ບກລ ຕ້ອງພິຈາລະນາຕັດສິນພາຍໃນ 60 ມື້ ຫຼັງຮັບການຂໍອຸທອນ.

ຫ້ອງການຂອງ ສວ-ບກລ ຕ້ອງສະໜອງເລກາທິ ແລະ ວັນທີຂາເຂົ້າ ໃນການຍື່ນຄໍາຮ້ອງຂໍອຸທອນ ຂອງນັກຝຶກງານເປັນນັກຊ່ຽວຊານບັນຊີ.

### ມາດຕາ 37 ການອອກໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ

ເມື່ອຄະນະກໍາມະການຝຶກອົບຮົມ ໄດ້ຮັບຮອງການຝຶກງານເປັນນັກຊ່ຽວຊານບັນຊີແລ້ວ, ຫ້ອງການຂອງ ສວ-ບກລ ຕ້ອງອອກໃບຢັ້ງຢືນການຝຶກງານເປັນນັກຊ່ຽວຊານບັນຊີ ຕາມທີ່ໄດ້ກໍານົດໃນມາດຕາ 35 ຂອງກົດ ໝາຍວ່າດ້ວຍການກວດສອບອິດສະລະ.

## ພາກທີ IX
## ບົດບັນຍັດສຸດທ້າຍ

### ມາດຕາ 38 ການຈັດຕັ້ງປະຕິບັດ

ສະພາບໍລິຫານງານ, ຫ້ອງການ ສວ-ບກລ, ຄະນະກໍາມະການຝຶກອົບຮົມ, ນັກຝຶກງານເປັນນັກຊ່ຽວຊານບັນຊີ ແລະ ພາກສ່ວນກ່ຽວຂ້ອງ ຕ້ອງຮັບຮູ້, ເຄົາລົບ ແລະ ຈັດຕັ້ງປະຕິບັດຂໍ້ກໍານົດຂອງລະບຽບການສະບັບນີ້ ຢ່າງເຄັ່ງຄັດ.

ບັນດາລະບຽບການ ແລະ ຂໍ້ກໍານົດ ຂອງ ສວ-ບກລ ທີ່ຈັດພິມຜ່ານມາ ຊຶ່ງຂັດກັບລະບຽບການສະບັບນີ້ ຖືກຍົກເລີກ.

**ມາດຕາ 39 ການຕີຄວາມໝາຍ**

ໃນການຈັດຕັ້ງປະຕິບັດລະບຽບການສະບັບນີ້ ຖ້າມີບັນຫາກ່ຽວກັບການຕີຄວາມໝາຍໃດໜຶ່ງ ໃຫ້ຂຽນໜັງສືສົ່ງໃຫ້ຄະນະກຳມະການຝຶກອົບຮົມ ເພື່ອພິຈາລະນາຕັດສິນ.

**ມາດຕາ 40 ຜົນບັງຄັບໃຊ້**

ລະບຽບການສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ປະທານສະພາວິຊາຊີບນັກບັນຊີແລະນັກກວດສອບ ລົງລາຍເຊັນ.

ນະຄອນຫຼວງວຽງຈັນ, ວັນທີ **14** ສິງຫາ 2020

ປະທານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ

ປະທານ

**ດຣ.ນ.ພິລານີ ພິດສະໄໝ**